ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສະຫວັນນະເຂດ

ເລກທີ 833 /ຈຂ

ສະຫວັນນະເຂດ, ວັນທີ 08 ພຶດສະພາ 2025

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນວັດທະນະທຳ ພາຍໃນແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20, ຂໍ້ທີ 13;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ(ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍມໍລະດົກແຫ່ງຊາດ (ສະບັບປັບປຸງ) ສະບັບເລກທີ 11/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມ ຂອງສະພາປະຊາຊົນແຂວງ ຊຸດທີ II ວ່າດ້ວຍ ການຮັບຮອງເອົາຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນວັດທະນະທຳ ສະບັບເລກທີ 33 /ສພຂ,ສຂ ລົງວັນທີ 27 ທັນວາ 2024.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ ເພື່ອອະນຸລັກຮັກສາ ແລະ ຄຸ້ມຄອງນຳໃຊ້ເຂົ້າໃນການສຶກສາຄົ້ນຄວ້າ ແລະ ພັດທະນາ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ຕາມທິດຍືນຍົງ ແລະ ເຮັດໃຫ້ທີ່ດິນມີຄຸນຄ່າເພີ່ມຂຶ້ນ, ພ້ອມດຽວກັນນັ້ນກໍເພື່ອເປັນບ່ອນອີງໃນການຈັດສັນ ແລະ ແບ່ງຄວາມຮັບຜິດຊອບໃຫ້ພາກສ່ວນທີ່ກ່ຽວຂ້ອງຕາມແຕ່ລະຂັ້ນໃນການຄຸ້ມຄອງ, ແນໃສ່ຮັບປະກັນໃຫ້ແກ່ການປົກປັກຮັກສາ, ພັດທະນາ ແລະ ການນຳໃຊ້ທີ່ດິນໃຫ້ຖືກຕ້ອງຕາມເປົ້າໝາຍ.

**ມາດຕາ 2 ທີ່ດິນວັດທະນະທຳ ແລະ ການຄຸ້ມຄອງ ທີ່ດິນວັດທະນະທຳ**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ ທີ່ຕັ້ງຂອງມໍລະດົກທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ແຫຼ່ງວັດຖຸບູຮານ, ມໍຣະດົກສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສາສະນະສະຖານ, ສິ່ງປຸກສ້າງທາງດ້ານວັດທະນະທຳ ລວມທັງເຂດວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ເປັນທີ່ດິນວັດທະນະທຳ.

ການຄຸ້ມຄອງທີ່ດິນວັດທະນະທຳ ແມ່ນການສຳຫຼວດ, ວັດແທກ, ເກັບກຳຂໍ້ມູນ, ຕິດຕາມ, ກວດກາ, ການຈັດຕັ້ງປະຕິບັດດ້ວຍຫຼາຍຮູບການ ເພື່ອປົກປ້ອງທີ່ດິນວັດທະນະທຳໃຫ້ໄດ້ຮັບການປົກປັກຮັກສາ, ບໍ່ໃຫ້ຖືກບຸກລຸກ, ຈັບຈອງ, ທຳລາຍ ຫຼື ປ່ຽນແປງທີ່ດິນດັ່ງກ່າວ. ການຄຸ້ມຄອງປະກອບມີຫຼາຍວິທີການ ເຊັ່ນ: ການສຳຫຼວດ, ການວາງແຜນການນຳໃຊ້, ການພັດທະນາ ແລະ ການຈັດສັນນຳໃຊ້ຢ່າງມີລະບຽບຫຼັກການ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ແຫຼ່ງບູຮານວິທະຍາ** ໝາຍເຖິງ ສະຖານທີ່ຊຶ່ງວັດຖຸບູຮານ, ສະຖານບູຮານ ແລະ ບັນດາຮ່ອງຮອຍຫຼັກຖານທາງປະຫວັດສາດ ຖືກຄົ້ນພົບຢູ່ຮ່ວມກັນເປັນກຸ່ມ;
2. **ວັດຖຸບູຮານ** ໝາຍເຖິງ ຜະລິດຕະພັນທາງດ້ານວັດຖຸທີ່ມີຄຸນຄ່າ ຊຶ່ງສ້າງຂຶ້ນໂດຍມະນຸດ ອັນເປັນຫຼັກຖານຢັ້ງຢືນເຖິງປະຫວັດສາດແຫ່ງຂະບວນການວິວັດຂອງສັງຄົມມະນຸດ;
3. **ມໍຣະດົກສະຖານ** ໝາຍເຖິງ ບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທຳມະຊາດ ແລະ ສະຖາປັດຕະຍະກຳ ຊຶ່ງມີຄຸນຄ່າທາງດ້ານວັດທະນະທຳ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ, ທັດສະນີຍະພາບ ທີ່ສືບທອດກັນມາ;
4. **ປູຊະນີຍະສະຖານ** ໝາຍເຖິງ ສະຖານທີ່ ຊຶ່ງເປັນບ່ອນເຄົາລົບບູຊາຂອງປະຊາຊົນ ທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ;
5. **ອະນຸສອນສະຖານ** ໝາຍເຖິງ ສະຖານທີ່ລະນຶກເຖິງ ວິລະກຳຂອງບັນພະບູລຸດ ແລະ ຂະບວນການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ສ້າງສາປະເ ທດຊາດ ເພື່ອ ຄວາມຊົງຈຳຂອງອະນຸຊົນຄົນຮຸ່ນຫຼັງ;
6. **ສາສະນະສະຖານ** ໝາຍເຖິງ ສະຖານທີ່ຈັດກິດຈະ ກຳທາງດ້ານສາສະໜາ, ບ່ອນສັກະລະບູຊາ ເຊັ່ນ: ວັດ, ພັດທະສີມາ, ໂບດ, ຫໍທຳມະສະພາ ແລະ ອື່ນໆ;
7. **ຮ່ອງຮອຍປະຫວັດສາດ** ໝາຍເຖິງ ສະຖານທີ່, ສິ່ງກໍ່ສ້າງທາງດ້ານສະຖາປັດຕະຍະກຳ, ບູຮານສະຖານ ຊຶ່ງມີວັດຖຸບູຮານ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ ແລະ ວິທະຍາສາດ;
8. **ສະຖາປັດຕະຍະກຳ** ໝາຍເຖິງ ສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ, ຂອງບັນພະບູລຸດ ແລະ ວິລະບູລຸດແຫ່ງຊາດ;
9. **ທີ່ດິນມໍຣະດົກ** ໝາຍເຖິງ ທີ່ດິນທີ່ຕິດພັນກັບແຫຼ່ງມໍຣະດົກວັດທະນະທຳ, ປະຫວັດສາດ ຊຶ່ງປະກອບມີ: ທີ່ດິນບູຮານສະຖານ, ທີ່ດິນມໍຣະດົກສະຖານ, ທີ່ດິນສາສະໜາສະຖານ ແລະ ທີ່ດິນແຫຼ່ງບູຮານວິທະຍາ;
10. **ທີ່ດິນຮ່ອງຮອຍປະຫວັດສາດ** ໝາຍເຖິງ ທີ່ດິນທີ່ມີ ສະຖານທີ່, ສິ່ງກໍ່ສ້າງທາງດ້ານສະຖາປັດຕະຍະກຳ, ບູຮານສະຖານ ຊຶ່ງມີວັດຖຸບູຮານ ທີ່ມີຄຸນຄ່າສູງທາງດ້ານວັດທະນະທຳ, ປະຫວັດສາດ ແລະ ວິທະຍາສາດ;

11. **ທີ່ດິນແຫຼ່ງບູຮານວິທະຍາ** ໝາຍເຖິງ ສະຖານທີ່ຊຶ່ງວັດຖຸບູຮານ, ສະຖານບູຮານ ແລະ ບັນດາຮ່ອງຮອຍຫຼັກຖານທາງປະຫວັດສາດ ຖືກຄົ້ນພົບຢູ່ຮ່ວມກັນເປັນກຸ່ມ;

12. **ທີ່ດິນມໍຣະດົກສະຖານ** ໝາຍເຖິງ ທີ່ດິນທີ່ມີບູຮານສະຖານ, ປູຊະນີຍະສະຖານ, ອະນຸສອນສະຖານ, ສະຖານທີ່ທຳມະຊາດ ແລະ ສະຖາປັດຕະຍະກຳ ຊຶ່ງມີຄຸນຄ່າ ທາງດ້ານວັດທະນະທຳ, ປະຫວັດສາດ, ວິທະຍາສາດ ຫຼື ເຕັກໂນໂລຊີ, ທັດສະນີຍະພາບ ທີ່ສືບທອດກັນມາ;

13. **ທີ່ດິນປູຊະນີຍະສະຖານ** ໝາຍເຖິງ ສະຖານທີ່ ຊຶ່ງເປັນບ່ອນເຄົາລົບບູຊາຂອງປະຊາຊົນ ທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ ແລະ ຮ່ອງຮອຍປະຫວັດສາດ;

14. **ທີ່ດິນອະນຸສອນສະຖານ** ໝາຍເຖິງ ສະຖານທີ່ລະນຶກເຖິງ ວິລະກຳຂອງບັນພະບຸລຸດ ແລະ ຂະບວນການຕໍ່ສູ້ອັນພິລະອາດຫານຂອງປະຊາຊົນລາວບັນດາເຜົ່າ ໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອຄວາມຊົງຈຳຂອງອະນຸຊົນຄົນຮຸ່ນຫຼັງ;

15. **ທີ່ດິນສາສະໜາສະຖານ** ໝາຍເຖິງ ທີ່ຕັ້ງຂອງສະຖານທີ່ທາງດ້ານສາສະໜາ ເຊັ່ນ: ວັດ, ພັດທະສີມາ, ໂບດ, ສຸເຫຼົ່າ, ຫໍທຳມະສະພາ ແລະ ບ່ອນສັກກະລະບູຊາ;

16. **ທີ່ດິນສະຖາປັດຕະຍະກຳ** ໝາຍເຖິງ ທີ່ດິນທີ່ມີສິ່ງກໍ່ສ້າງແຫ່ງສິລະປະທີ່ໂດດເດັ່ນທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງຕິດພັນກັບແບບແຜນດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ, ຂອງບັນພະບຸລຸດ ແລະ ວິລະບຸລຸດແຫ່ງຊາດ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນວັດທະນະທຳ

ອົງການປົກຄອງແຂວງ ຊຸກຍູ້, ສົ່ງເສີມ ໃຫ້ອົງການປົກຄອງ 14 ເມືອງ 1 ນະຄອນ, ອົງການປົກຄອງບ້ານ ຖືເປັນບູລິມະສິດຕໍ່ວຽກງານຄຸ້ມຄອງທີ່ດິນວັດທະນະທຳ ຕາມການຮັບຮອງຂອງຄະນະຮັບຜິດຊອບ;

ອົງການປົກຄອງແຂວງ, ອົງການປົກຄອງ 14 ເມືອງ 1 ນະຄອນ, ອຳນາດການປົກຄອງບ້ານ ສົ່ງເສີມ ແລະ ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ ແລະ ມີສ່ວນຮ່ວມໃນການສະໜອງຂໍ້ມູນຂ່າວສານ, ປົກປັກຮັກສາ, ອະນຸລັກ, ບູລະນະ, ຟື້ນຟູ ທີ່ດິນວັດທະນະທຳ ໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ ແລະ ໃຫ້ມີຄວາມຍືນຍົງຕະຫຼອດໄປ.

## ມາດຕາ 5 ຫຼັກການກ່ຽວກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນວັດທະນະທຳ

ການຄຸ້ມຄອງ ແລະ ນຳໃຊ້ ທີ່ດິນວັດທະນະທຳ ໃນຂອບເຂດທົ່ວແຂວງສະຫວັນນະເຂດ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ໃຫ້ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ດຳລັດ, ຂໍ້ຕົກລົງ, ຄຳແນະນຳ ແລະ ລະບຽບ ການຂອງລັດທີ່ໄດ້ກຳນົດໄວ້ຕາມແຕ່ລະໄລຍະ;
2. ການຈັດຕັ້ງແຕ່ລະຂັ້ນ, ຂະແໜງການທີ່ກ່ຽວຂ້ອງ ນັບທັງບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ ຢູ່ພາຍໃນແຂວງສະຫວັນນະເຂດ ຕ້ອງເຄົາລົບ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;
3. ທຸກໆກິດຈະການ ທີ່ມີຈຸດປະສົງຈະເຊົ່າ, ສຳປະທານ ໃນບໍລິເວນໃດໜຶ່ງ ຂອງເຂດທີ່ດິນວັດທະນະທຳຕ້ອງໄດ້ຮັບການອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
4. ການກໍ່ສ້າງໃໝ່, ການບູລະນະສ້ອມແປງ, ມໍລະດົກສະຖານ, ປູຊະນີຍະສະຖານ, ວັດຖຸບູຮານທີ່ຢູ່ໃນຂອບເຂດທີ່ດິນວັດທະນະທຳຕ້ອງປະຕິບັດຕາມກົດໝາຍມໍຣະດົກແຫ່ງຊາດ (ສະບັບປັບປຸງ) ເລກທີ 11/ສພຊ ລົງວັນທີ 16 ພະຈິກ 2021 ຢ່າງເຂັ້ມງວດ;

**ມາດຕາ 6 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ທີ່ຄອບຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ ໃນຂອບເຂດແຂວງສະຫວັນນະເຂດ.

## ໝວດທີ 2
## ປະເພດ ແລະ ການກຳນົດຂອບເຂດ ທີ່ດິນວັດທະນະທຳ

**ມາດຕາ 7 ປະເພດຂອງທີ່ດິນວັດທະນະທຳ**

ທີ່ດິນທີ່ຖືກກຳນົດເປັນດິນວັດທະນະທຳ ປະກອບມີ:

1. **ປະເພດທີ່ດິນມໍຣະດົກສະຖານ** ແມ່ນດິນທີ່ຕິດພັນກັບແຫຼ່ງມໍຣະດົກທາງດ້ານວັດທະນະທຳ ແລະ ປະຫວັດສາດ ຊຶ່ງປະກອບມີ:
   1) ທີ່ດິນ ບູຮານສະຖານ;
   2) ທີ່ດິນ ສາສະນະສະຖານ;
   3) ທີ່ດິນ ແຫຼ່ງບູຮານວິທະຍາ.
2. **ປະເພດທີ່ດິນ ຮ່ອງຮອຍປະຫວັດສາດ:** ທີ່ດິນຮ່ອງຮອຍປະຫວັດສາດ ປະກອບມີ:
   1) ທີ່ດິນແຫຼ່ງບູຮານສະຖານ ແມ່ນແຫຼ່ງທີ່ຢູ່ອາໄສ, ດຳລົງຊີວິດຂອງຄົນ ຫຼື ມະນຸດບູຮານສ້າງຂຶ້ນໃນເມື່ອກ່ອນ;
   2) ທີ່ດິນສະຖານທີ່ປະຫວັດສາດ ແມ່ນບ່ອນທີ່ເປັນທີ່ໝັ້ນຂອງການຕໍ່ສູ້ກູ້ຊາດ ຫຼື ບ່ອນເປັນທີ່ຕັ້ງ ຂອງກຳລັງປະກອບອາວຸດ ຂອງທະຫານໃນເມື່ອກ່ອນ.
3. **ປະເພດທີ່ດິນ ປູສະນີຍະສະຖານ**: ແມ່ນສະຖານທີ່ເຄົາລົບ, ສັກກະລະບູຊາ, ຂອງປະຊາຊົນລາວບັນດາເຜົ່າ ທີ່ຕິດພັນກັບການເຄື່ອນໄຫວທາງສາສະໜາ, ຮີດຄອງປະເພນີ, ຄວາມເຊື່ອຖືຂອງບັນດາເຜົ່າ ຊຶ່ງປະກອບມີ:
   1) ທີ່ດິນພຣະທາດ ເກົ່າແກ່ຄູ່ບ້ານຄູ່ເມືອງ;
   2) ທີ່ດິນຫໍຫຼັກເມືອງ;
   3) ທີ່ດິນຫໍບ້ານ;
   4) ທີ່ດິນຫໍມະເຫສັກ ຫຼື ທີ່ດິນຫຼັກບ້ານ;
   5) ທີ່ດິນປ່າຊ້າ;
   6) ທີ່ດິນປ່າສັກສິດ;
   7) ທີ່ດິນວັດ.

**ມາດຕາ 8 ເນື້ອທີ່ດິນວັດທະນະທຳ**

ຕາມແຜນແມ່ບົດຈັດສັນທີ່ດິນເບື້ອງຕົ້ນ ຂອງພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ສະບັບເລກທີ 0811 /ຈຂ.ສຂ, ລົງວັນທີ 04 ພຶດສະພາ 2021 ເນື້ອທີ່ດິນ ທີ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວຄຸ້ມຄອງ ມີຈຳນວນ 33,618.29 (ສາມສິບສາມພັນຫົກຮ້ອຍສິບແປດຈຸດສອງເກົ້າ) ເຮັກຕາ ດັ່ງນີ້:

1. ທີ່ດິນວັດທະນະທຳ ຈຳນວນ 1,990.26 (ໜຶ່ງພັນເກົ້າຮ້ອຍເກົ້າສິບຈຸດສອງຫົກ) ເຮັກຕາ;

2. ທີ່ດິນ ສະຖານທີ່ທ່ອງທ່ຽວ ທາງທຳມະຊາດ ຈຳນວນ 31,628.03 (ສາມສິບເອັດພັນຫົກຮ້ອຍຊາວແປດຈຸດສູນສາມ) ເຮັກຕາ.

## ໝວດທີ 3
## ການສຳຫຼວດ - ວັດແທກ, ການປົກປັກຮັກສາ, ການພັດທະນາ

### ມາດຕາ 9 ການສຳຫຼວດ - ວັດແທກ

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນເຈົ້າການໃນການປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ພະແນກການອື່ນທີ່ກ່ຽວຂ້ອງ, ອົງການປົກຄອງເມືອງ, ນະຄອນ, ອົງການປົກຄອງບ້ານ ດຳເນີນການສຳຫຼວດ, ວັດແທກທີ່ດິນວັດທະນະທຳ ໂດຍການເຂົ້າຮ່ວມເປັນພະຍານຂອງປະຊາຊົນໃນເຂດທ້ອງຖິ່ນທີ່ມີທີ່ດິນວັດທະນະທຳຕັ້ງຢູ່.

### ມາດຕາ 10 ການປົກປັກຮັກສາ

ທີ່ດິນວັດທະນະທຳ ຕ້ອງໄດ້ຮັບການປົກຮັກສາດ້ວຍການກຳນົດຂອບເຂດ, ພື້ນທີ່ທີ່ດິນສະຫງວນ, ທີ່ດິນອະນຸລັກທາງດ້ານວັດທະນະທຳ, ປະຫວັດສາດ ໂດຍວາງລະບຽບການ ແລະ ມາດຕະການ ເພື່ອນຳໃຊ້ເຂົ້າໃນການປົກປັກຮັກສາທີ່ດິນດັ່ງກ່າວ ໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນ ແລະ ແຜນການນຳໃຊ້ທີ່ດິນຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ອົງການປົກຄອງທ້ອງຖິ່ນ ໃນແຕ່ລະໄລຍະ.

### ມາດຕາ 11 ການພັດທະນາ

ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ສົມທົບກັບພະແນກການກ່ຽວຂ້ອງ ແລະ ອົງການປົກຄອງເມືອງ, ນະຄອນ, ອົງການປົກຄອງບ້ານ ເພື່ອກຳນົດການພັດທະນາທີ່ດິນວັດທະນະທຳ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການກ່ຽວກັບການອະນຸລັກ, ຮັກສາ ແລະ ບູລະນະຟື້ນຟູ ທີ່ດິນວັດທະນະທຳເພື່ອໃຫ້ມີຄຸນຄ່າ.

### ມາດຕາ 12 ການນຳໃຊ້ທີ່ດິນວັດທະນະທຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສາມາດນຳໃຊ້ທີ່ດິນວັດທະນະທຳເຂົ້າໃນເປົ້າໝາຍໃດໜຶ່ງ ເພື່ອການອະນຸລັກ ແລະ ການທ່ອງທ່ຽວ ຕາມແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນ ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ອົງການປົກຄອງເມືອງ, ນະຄອນ, ອົງການປົກຄອງບ້ານ ແຕ່ການນຳໃຊ້ນັ້ນ ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບທີ່ບໍ່ດີຕໍ່ທີ່ດິນດັ່ງກ່າວ ແລະ ຕ້ອງປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ;

ທີ່ດິນວັດທະນະທຳ ໃນກໍລະນີໃດກໍຕາມ ບໍ່ອະນຸຍາດໃຫ້ມອບສິດນຳໃຊ້ ດ້ວຍການອອກໃບຕາດິນໃຫ້ບຸກຄົນ, ນິຕິບຸກຄົນ ຢ່າງເດັດຂາດ.

## ໝວດທີ 4
## ການຄຸ້ມຄອງ ແລະ ການນຳໃຊ້

**ມາດຕາ 13 ອົງການຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ**

ອົງການປົກຄອງແຂວງເປັນຜູ້ຄຸ້ມຄອງຢ່າງລວມສູນໃນຂອບເຂດທົ່ວແຂວງໂດຍມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ເປັນເຈົ້າການໃນການຄຸ້ມຄອງໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງດັ່ງນີ້:

1. ຂັ້ນແຂວງ: ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ
2. ຂັ້ນເມືອງ, ນະຄອນ: ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ, ນະຄອນ
3. ຂັ້ນບ້ານ: ອົງການປົກຄອງບ້ານ.

**ມາດຕາ 14 ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ**

1. ເປັນໃຈກາງປະສານງານສົມທົບຮ່ວມກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ພະແນກການ, ກົມກອງທີ່ກ່ຽວຂ້ອງ;
2. ໂຄສະນາເຜີຍແຜ່ກົດໝາຍ, ຂໍ້ກຳນົດ, ກົດລະບຽບ, ລະບຽບການກ່ຽວກັບທີ່ດິນວັດທະນະທຳ, ປູກຈິດສຳນຶກໃຫ້ຄົນໃນສັງຄົມເຂົ້າຮ່ວມໃນການຄຸ້ມຄອງທີ່ດິນວັດທະນະທຳ, ສະໜອງຂໍ້ມູນຂ່າວສານທີ່ເປັນປະໂຫຍດໃຫ້ແກ່ສັງຄົມເພື່ອຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງ;
3. ຮັບຜິດຊອບໂດຍກົງໃນການຄຸ້ມຄອງ, ຕິດຕາມ, ກວດກາ ຂອບເຂດທີ່ດິນວັດທະນະທຳ ພາຍໃນແຂວງ ໃຫ້ສອດຄ່ອງກັບລະບຽບການ;
4. ຄົ້ນຄວ້າ, ສ້າງແຜນໃນການເຄື່ອນໄຫວວຽກງານ ກ່ຽວກັບການອະນຸລັກ, ວັດຖຸບູຮານ, ປູຊະນີຍະສະຖານ, ຮ່ອງຮອຍປະຫວັດສາດ ທີ່ນອນໃນຂອບເຂດທີ່ດິນວັດທະນະທຳ;
5. ຊອກຄົ້ນ, ເກັບກຳ ແລະ ຊຸກຍູ້ການຂຶ້ນທະບຽນວັດຖຸບູຮານ, ມໍຣະດົກສະຖານທີ່ມີໃນເຂດທີ່ດິນວັດທະນະທຳ ເພື່ອບໍ່ໃຫ້ວັດຖຸບູຮານຕົກເຮ່ຍເສຍຫາຍ ຫຼື ຖືກທຳລາຍ;
6. ຕິດຕາມ, ກວດກາ ຄວາມຖືກຕ້ອງ ເພື່ອອອກໜັງສືຢັ້ງຢືນໃຫ້ເຈົ້າຂອງທີ່ດິນ ທີ່ມີຂອບເຂດຕິດກັບເຂດທີ່ດິນວັດທະນະທຳ ເພື່ອເປັນເອກະສານອ້າງອີງໃຫ້ພາກສ່ວນກ່ຽວຂ້ອງ ກ່ອນທີ່ຈະອອກໃບຕາດິນຖາວອນໃຫ້ບຸກຄົນ, ນິຕິບຸກຄົນ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ນະຄອນ**

1. ປະສານສົມທົບກັບຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ ແລະ ຫ້ອງການ, ກົມກອງທີ່ກ່ຽວຂ້ອງ;
2. ມີສ່ວນຮ່ວມໃນການໂຄສະນາ, ເຜີຍແຜ່ ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອປຸກລະດົມໃຫ້ປະຊາຊົນຮັບຮູ້ເຂົ້າໃຈທີ່ດິນວັດທະນະທຳ, ເຄົາລົບ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ປະກົດຜົນເປັນຈິງ;

3. ຈັດຕັ້ງປະຕິບັດແຜນການ, ໂຄງການລະອຽດຮ່ວມກັບອົງການຄຸ້ມຄອງຂັ້ນແຂວງ ກ່ຽວກັບວຽກງານການຄຸ້ມຄອງທີ່ດິນວັດທະນະທຳ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມທີ່ຂັ້ນເທິງມອບໝາຍໃຫ້;
4. ສະຫຼຸບ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ທີ່ດິນວັດທະນະທຳ ໃຫ້ຂັ້ນເທິງ ໃນແຕ່ລະໄລຍະຢ່າງເປັນທາງການ;
5. ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 16 ສິດ ແລະ ໜ້າທີ່ ອົງການປົກຄອງບ້ານ**

1. ອົງການປົກຄອງບ້ານ ທີ່ມີດິນວັດທະນະທຳ ນອນຢູ່ໃນຂອບເຂດຂອງບ້ານມີສ່ວນຮ່ວມໃນການ ເຜີຍແຜ່ ແລະ ປຸກລະດົມປະຊາຊົນບັນດາເຜົ່າໃນເຂດຄວາມຮັບຜິດຊອບຂອງຕົນໄດ້ຮັບຮູ້ຢ່າງທົ່ວເຖິງ;
2. ໃຫ້ການຮ່ວມມືກັບອົງການຄຸ້ມຄອງຂັ້ນແຂວງ, ຂັ້ນເມືອງ, ນະຄອນ ກ່ຽວກັບ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງທີ່ດິນວັດທະນະທຳ ຕາມພາລະບົດບາດ ແລະ ສິດໜ້າທີ່ ທີ່ຢູ່ໃນຄວມຮັບຜິດຊອບ ຂອງຕົນ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ໃນແຕ່ລະໄລຍະ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ບຸກລຸກ, ບຽດຍຶດ, ຈັບຈອງ, ລັກໂລບເອົາ, ປ່ຽນແປງຂອບເຂດ ທີ່ດິນວັດທະນະທຳ ເພື່ອຜົນປະໂຫຍດສ່ວນຕົວ, ການຈັດຕັ້ງ ແລະ ອື່ນໆ;
2. ສຳປະທານເນື້ອທີ່ດິນ ຂອບເຂດທີ່ດິນວັດທະນະທຳ ໂດຍບໍ່ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ນຳໃຊ້ທີ່ດິນວັດທະນະທຳ ເຂົ້າໃນເປົ້າໝາຍໃດໜຶ່ງ ທີ່ຈະພາໃຫ້ປ່ຽນແປງສະຖານະພາບເດີມ;
4. ທຳລາຍ, ວັດຖຸບູຮານ, ສະຖານບູຮານ, ປູຊະນີຍະສະຖານ, ຮ່ອງຮອຍທາງປະຫວັດສາດ ໃນເຂດທີ່ດິນວັດທະນະທຳ;
5. ມີການກໍ່ສ້າງສິ່ງໃໝ່ ໃສ່ຂອບເຂດທີ່ດິນວັດທະນະທຳ ໂດຍບໍ່ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
6. ນຳເອົາວັດຖຸບູຮານອອກຈາກຂອບເຂດ ທີ່ດິນວັດທະນະທຳ ໂດຍບໍ່ໄດ້ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;
7. ນຳເອົາຜະລິດຕະພັນທາງດ້ານວັດທະນະທຳ ເຂົ້າມາປະດິດສະຖານໃນເຂດທີ່ດິນວັດທະນະທຳ ກ່ອນໄດ້ຮັບການອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;
8. ດຳເນີນການສຳຫຼວດ, ຂຸດຄົ້ນ, ຄົ້ນຄວ້າເພື່ອຊອກຫາວັດຖຸບູຮານໃນເຂດທີ່ດິນວັດທະນະທຳ ໂດຍບໍ່ໄດ້

ຮັບອະນຸຍາດຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ;

9. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

### ມາດຕາ 18 ຂໍ້ຫ້າມສຳລັບພະນັກງານ ແລະ ຂະແໜງການທີ່ຮັບຜິດຊອບວຽກງານຄຸ້ມຄອງທີ່ດິນວັດທະນະທຳ

ຫ້າມພະນັກງານ ແລະ ຂະແໜງການທີ່ຮັບຜິດຊອບວຽກງານຄຸ້ມຄອງທີ່ດິນວັດທະນະທຳ ມີພຶດຕິກຳດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ ເພື່ອຮັບຜົນປະໂຫຍດສ່ວນຕົວຈາກວຽກງານຄຸ້ມຄອງທີ່ດິນວັດທະນະທຳ;
2. ເມີນເສີຍ, ປະລະໜ້າທີ່ວຽກງານ ຄຸ້ມຄອງທີ່ດິນວັດທະນະທຳ ທີ່ການຈັດຕັ້ງມອບໝາຍໃຫ້;
3. ເປີດເຜີຍຄວາມລັບທາງລັດຖະການ ກ່ຽວກັບວຽກງານການຄຸ້ມຄອງທີ່ດິນວັດທະນະທຳ;
4. ປອມແປງເອກະສານ ກ່ຽວກັບວຽກງານຄຸ້ມຄອງທີ່ດິນວັດທະນະທຳ;
5. ເກັບຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ໄດ້ຮັບອະນຸຍາດ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບ ແລະ ກົດໝາຍ.

## ໝວດທີ 6
## ການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ

### ມາດຕາ 19 ອົງການກວດກາ

ອົງການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານທີ່ດິນວັດທະນະທຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາປະຊາຊົນແຂວງ, ອົງການກວດກາແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ.

### ມາດຕາ 20 ເນື້ອໃນການກວດກາ

ການກວດກາວຽກງານຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດຈັດສັນທີ່ດິນ, ແຜນການ;
2. ນຳໃຊ້ກົດໝາຍວ່າດ້ວຍທີ່ດິນ ແລະ ລະບຽບການກ່ຽວກັບວຽກງານທີ່ດິນ;
3. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງອົງການຄຸ້ມຄອງວຽກງານທີ່ດິນວັດທະນະທຳ;
4. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການນຳໃຊ້ມາດຕະການທາງດ້ານກົດໝາຍຕໍ່ຜູ້ລະເມີດ

### ມາດຕາ 21 ຮູບການການກວດກາ

ການກວດກາ ມີ 03 ຮູບແບບ ດັ່ງນີ້:

1. ການກວດກາແບບປົກກະຕິ: ການກວດກາຕາມປົກກະຕິ ແມ່ນການກວດກາທີ່ມີລັກສະນະເປັນປະ

ຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ;

2. ການກວດກາໂດຍທີ່ມີການແຈ້ງໃຫ້ຮູ້ລ່ວງໜ້າ: ການກວດກາທີ່ມີຄຳສະເໜີຮ້ອງຟ້ອງ, ຮ້ອງທຸກ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

3. ການກວດກາແບບກະທັນຫັນ: ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາ ທີ່ມີເຫດການສັບສົນ, ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ. ການກວດກາໃຫ້ກວດທັງເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ໝວດທີ 7
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 22 ຮູບການແກ້ໄຂຂໍ້ຂັດແຍ່ງ

ຮູບການແກ້ໄຂຂໍ້ຂັດແຍ່ງດຳເນີນດ້ວຍຮູບການດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການແກ້ໄຂຕາມຂະບວນການຍຸຕິທຳ;
5. ການແກ້ໄຂຄຳຮ້ອງຟ້ອງຂໍຄວາມເປັນທຳ;
6. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 23 ການໄກ່ເກ່ຍ ຫຼື ການປະນີປະນອມ

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນອັດທະນະທຳ ຕ້ອງຮັບປະກັນຄວາມຍຸຕິທຳ, ໂປ່ງໃສ, ມີປະສິດທິຜົນ, ການມີສ່ວນຮ່ວມຂອງບຸກຄົນ, ການຈັດຕັ້ງໃນທ້ອງສັງຄົມ ແລະ ສາມາດກວດສອບຄວາມຖືກຕ້ອງໄດ້.

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງທີ່ດິນອັດທະນະທຳ ຄູ່ກໍລະນີສາມາດໄກ່ເກ່ຍ ຫຼື ປະນີປະນອມກັນ.

### ມາດຕາ 24 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນອັດທະນະທຳ ທີ່ມີລັກສະນະບໍລິຫານ, ຄູ່ກໍລະນີ ມີສິດສະເໜີໃຫ້ອົງການຄຸ້ມຄອງທີ່ດິນອັດທະນະທຳ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມ ກົດໝາຍ.

### ມາດຕາ 25 ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນອັດທະນະທຳ ຄູ່ກໍລະນີມີສິດ ສະເໜີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ພິຈາລະນາຕາມກົດໝາຍ.

**ມາດຕາ 26 ການແກ້ໄຂຕາມຂະບວນການຍຸຕິທຳ**

ໃນກໍລະນີຂໍ້ຂັດແຍ່ງທີ່ມີການຮ້ອງຟ້ອງກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳຄູ່ກໍລະນີ ຝ່າຍໃດ ຝ່າຍໜຶ່ງມີສິດຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 27 ການແກ້ໄຂຄຳຮ້ອງຟ້ອງຂໍຄວາມເປັນທຳ**

ການແກ້ໄຂຄຳຮ້ອງຟ້ອງຂໍຄວາມເປັນທຳ ຕາມກົດໝາຍ ວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ(ສະບັບປັບປຸງປີ 2022) ແມ່ນຄຳຮ້ອງຂໍຄວາມເປັນທຳ ທີ່ຍື່ນຕໍ່ຄະນະປະຈຳສະພາປະຊາຊົນແຂວງ ເພື່ອໃຫ້ກວດກາ ແລະ ພິຈາລະນາກ່ຽວກັບການຕົກລົງຂອງອົງການປົກຄອງທ້ອງຖິ່ນ, ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ. ສານປະຊາຊົນທີ່ເຫັນວ່າ ການແກ້ໄຂນັ້ນເປັນການລະເມີດກົດໝາຍກໍ່ຄວາມເສຍ ຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກ ຄົນ ແລະ ການຈັດຕັ້ງ.

**ມາດຕາ 28 ການແກ້ໄຂທີ່ມີລັກສະນະສາກົນ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ມີລັກສະນະສາກົນກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທີ່ດິນວັດທະນະທຳ ໃຫ້ປະຕິບັດ ຕາມສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 29 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນວັດທະນະທຳຖືກຕ້ອງຕາມ ເປົ້າໝາຍ ແລະ ມີປະສິດທິຜົນຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 30 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງຫຼືຖືກລົງໂທດທາງອາຍາຕາມກົດໝາຍ ບຸກຄົນໃດຫາກໄດ້ກະທຳ ຫຼື ສົມຮູ້ຮ່ວມຄິດໃນການປອມແປງໃບຕາດິນ, ອອກໃບຕາດິນຊໍ້າຊ້ອນ ຫຼື ທັບຊ້ອນຈະຖືກປັບ ໃໝສອງເທົ່າຂອງມູນຄ່າການເສຍຫາຍ ແລະ ຖືກລົງໂທດທາງອາຍາ ຕາມກົດໝາຍ;

ໃນກໍລະນີ ກວດກາເຫັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເປັນພົນລະເມືອງລາວ ຂາຍສິດນຳໃຊ້ທີ່ດິນໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ລວມທັງການຈັດຕັ້ງຂອງບຸກຄົນດັ່ງກ່າວທີ່ສ້າງຕັ້ງຂຶ້ນຕາມການອະນຸຍາດຂອງລັດໂດຍໃສ່ຊື່ ຫຼື ບໍ່ໃສ່ຊື່ພົນລະເມືອງລາວໄວ້. ນອກຈາກຖືກປະຕິບັດມາດຕະການຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ຂອງມາດຕານີ້ແລ້ວແມ່ນໃຫ້ຮິບທີ່ດິນຕອນນັ້ນເປັນຂອງລັດ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 31 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ, ນະຄອນ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ ເປັນໃຈກາງປະສານສົມທົບກັບສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ ມີປະສິດທິຜົນສູງ;

ພະແນກການ, ອົງການທຽບເທົ່າຂັ້ນແຂວງ, ຂັ້ນເມືອງ, ນະຄອນ, ການຈັດຕັ້ງທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວດຳລົງຊີວິດພາຍໃນແຂວງສະຫວັນນະເຂດ ຈົ່ງຮັບຮູ້ ແລະ ປະຕິບັດຢ່າງເຂັ້ມງວດ.

**ມາດຕາ 32 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ;

ຂໍ້ກຳນົດ, ກົດລະບຽບ, ບົດບັນຍັດ, ຂໍ້ຕົກລົງສະບັບໃດທີ່ປະກາດໃຊ້ໃນເມື່ອກ່ອນກ່ຽວກັບການຄຸ້ມຄອງທີ່ດິນວັດທະນະທຳ ຢູ່ແຂວງສະຫວັນນະເຂດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງ**

ແຂວງສະຫວັນນະເຂດ ເຈົ້າແຂວງ

ບຸນໂຈມ ອຸບົນປະເສີດ